ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 089/ປທລ/2024

ນະຄອນຫຼວງວຽງຈັນ, ວັນທີ: 10 ພຶດສະພາ 2024

ຍິດຍັນທຶກ ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023
ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ປທລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ເມື່ອວັນທີ 30 ເມສາ 2024 ເວລາ 09:00 ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ ກຳແພງເມືອງ ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມ ທັງໝົດ 14 ທ່ານ ໃນນັ້ນ ຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 6 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 8 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 198.764.490 ຮຸ້ນ, ເທົ່າກັບ 84,58% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ ຖືວ່າຄົບອົງປະຊຸມຕາມກົດໝາຍວິສາຫະກິດ ແລະ ລະບຽບຂອງບໍລິສັດ.

ສະມາຊິກສະພາບໍລິຫານ ແລະ ເຈົ້າໜ້າທີ່ກ່ຽວຂ້ອງທີ່ໄດ້ເຂົ້າຮ່ວມກອງປະຊຸມ ມີດັ່ງນີ້:

1.	ທ່ານ ຫວ່າງ ຣັຕະນະວົງສ໌	ປະທານສະພາບໍລິຫານ
2.	ທ່ານ ນາງ ແສງເດືອນ ກ້ຽວສຸວັດ	ສະມາຊິກສະພາບໍລິຫານ;
3.	ທ່ານ ວຽງຄອນ ສິດທິໄຊ	ປະທານຄະນະກຳມະການເສດຖະກິດ, / ສະມາຊິກສະພາບໍລິຫານ ອິດສະລະ;
4.	ທ່ານ ບຸນຖັນ ວົງສຸລີ	ປະທານຄະນະກຳມະການກວດກາຄວາມສ່ຽງພາຍໃນ, / ສະມາຊິກສະພາບໍລິຫານ ອິດສະລະ;
5.	ທ່ານ ສຈ ດາວອນ ຫວ່າງວິຈິດ	ປະທານຄະນະກຳມະການກວດສອບພາຍໃນ, / ສະມາຊິກສະພາບໍລິຫານ ອິດສະລະ.

ທ່ານ ຄຳສອນ ສິດທິໄຊ ຮອງປະທານສະພາບໍລິຫານ ແລະ ທ່ານ ມາກ ລູວັນ ສະມາຊິກສະພາບໍລິຫານ ບໍ່ສາມາດເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ໄດ້ ເນື່ອງຈາກຕິດພາລະກິດ.

ໃນກອງປະຊຸມ, ຍັງມີທ່ານ ທ່ານ ສິລາ ວຽງແກ້ວ ປະທານສະພາບໍລິຫານອິດສະລະ ຜູ້ໃໝ່, ທ່ານ ນາງ ຈັນທະດອນ ເມກສະຫວັນ ຫົວໜ້າຝ່າຍບັນຊີ-ການເງິນ, ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ, ຄະນະກວດກາ ແລະ ລົງຄະແນນສຽງ ໄດ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້.

ພິທີກອນໄດ້ແຈ້ງໃຫ້ກອງປະຊຸມຮັບຊາບບັນດາວາລະກອງປະຊຸມ, ວິທີການລົງຄະແນນສຽງ ແລະ ການນັບຜົນຄະແນນສຽງ.

ຫຼັງຈາກນັ້ນ, ທ່ານ ຫວ່າງ ຣັຕະນະວົງສ໌ ປະທານກອງປະຊຸມ ໄດ້ກ່າວເປີດກອງປະຊຸມ ແລະ ດຳເນີນການປະຊຸມໃນແຕ່ລະວາລະ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

<u>ວາລະທີ 01: ພິຈາລະນາ ແລະ ຮັບຮອງເອົາ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022</u>

ປະທານກອງປະຊຸມໄດ້ລາຍງານຕໍ່ກອງປະຊຸມ: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ໄດ້ຈັດຂຶ້ນໃນວັນທີ 25 ພຶດສະພາ 2023 ໂດຍກອງປະຊຸມໄດ້ພິຈາລະນາກິດຈະກຳຕ່າງໆ ເຊິ່ງກອງປະຊຸມດັ່ງກ່າວໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ.

ຫຼັງປະທານກອງປະຊຸມ ໄດ້ລາຍງານວາລະນີ້ແລ້ວກໍ່ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ ປະກອບຄຳເຫັນ ແລະ ສອບຖາມ ເຊິ່ງມີຜູ້ຖືຮຸ້ນມີຄຳເຫັນດັ່ງນີ້:

ຜູ້ຖືຮຸ້ນ: ທ່ານ ນາງ ຕຸກຕາ ແກ້ວວິຈິດ (ໄດ້ຮັບມອບສິດຈາກ ທ່ານ ໄກອັນ ກາດາວານິດ) ປະກອບຄຳເຫັນວ່າ ບົດບັນທຶກກອງປະຊຸມປີ 2022 ສະບັບພາສາລາວຖືກຕ້ອງໝົດ ແຕ່ສະບັບພາສາອັງກິດຕ້ອງແກ້ໄຂໃນໜ້າທີ 9, ຂໍ້ທີ 1, ແຖວທີ 6 ຫຼັງຄຳວ່າ opened ກ່ອນຄຳວ່າ together ຢາກໃຫ້ແຊກ to follow. ສ່ວນແຖວທີ 8 ຕໍ່ທ້າຍໃສ່ວົງເລັບ Revision number. ຂໍ້ທີ 2 ແຖວທີ 3 ຢາກໃຫ້ປ່ຽນຄຳວ່າ is ເປັນຄຳວ່າ was ເພາະມັນເປັນອາດີດບໍ່ແມ່ນປັດຈຸບັນໃນຕອນນັ້ນ.

ປະທານກອງປະຊຸມ: ຂອບໃຈຕໍ່ຄຳເຫັນດັ່ງກ່າວ ແລະ ບໍລິສັດຍິນດີແກ້ໄຂສະບັບພາສາອັງກິດຕາມຄຳເຫັນດັ່ງກ່າວດັ່ງນີ້:

<u>ກ່ອນປັບ:</u>

The financial statement of the year 2022 in details (Attachment 3)

After Mr. Mark LOUVANT, Director member's briefly report, The Chairman of the meeting encouraged the meeting to have comment, and there were comments and suggestion as following:

- **Mr. Kraiwal KADAVANICH),** the shareholder had comments and suggestion as follows:

  1) In the agenda 2 regarding to the business performance result of PTL related to the compliance which had been mentioned on the subject of human resource management. It is proposed that the invitation letter should have been specified the page number as the result of that the shareholders were able to specify the page number to the chairman while having the questions so that the document can be opened together correctly. Moreover, in the case that some information which has been modified to replace the old information, it should clearly specify on what point and how many times that the document was modified or replaced so as not to cause confusion and to realize which document is the latest version. Therefore, I would like to propose to the committee in charge of preparing the document to further review on this point as well;

  2) The company has postponed the date of the meeting for two times and this is the third time that the meeting is able to be held successfully; in which, the notice letter to the shareholders about the date of postponement is only one day prior to the meeting in each time, and attending the meeting of some shareholders shall require expenses to prepare for the trip in each time. In addition, the reason for the postponement on notice letter which was disclosed should be specified without affecting any party and the legal department of the company should inspect the documents before disclose to the public. Therefore, I would like to propose to the company and the committee in charge of preparing the document to consider this suggestion;

ฮ้าปับ:

The financial statement of the year 2022 in details (Attachment 3)

After Mr. Mark LOUVANT, Director member's briefly report, The Chairman of the meeting encouraged the meeting to have comment, and there were comments and suggestion as following:

- **Mr. Kraiwal KADAVANICH),** the shareholder had comments and suggestion as follows:

  1) In the agenda 2 regarding to the business performance result of PTL related to the compliance which had been mentioned on the subject of human resource management. It is proposed that the invitation letter should have been specified the page number as the result of that the shareholders were able to specify the page number to the chairman while having the questions so that the document can be opened to follow together correctly. Moreover, in the case that some information which has been modified to replace the old information, it should clearly specify on what point and how many times that the document was modified or replaced (Revision number) so as not to cause confusion and to realize which document is the latest version. Therefore, I would like to propose to the committee in charge of preparing the document to further review on this point as well;

  2) The company has postponed the date of the meeting for two times and this is the third time that the meeting was able to be held successfully; in which, the notice letter to the shareholders about the date of postponement is only one day prior to the meeting in each time, and attending the meeting of some shareholders shall require expenses to prepare for the trip in each time. In addition, the reason for the postponement on notice letter which was disclosed should be specified without affecting any party and the legal department of the company should inspect the documents before disclose to the public. Therefore, I would like to propose to the company and the committee in charge of preparing the document to consider this suggestion;

<u>ວາລະທີ 02: ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2023 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2023</u>

ປະທານກອງປະຊຸມໄດ້ລາຍງານຕໍ່ກອງປະຊຸມ:

I. **ຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2023 ມີດັ່ງນີ້:**

1. ການຂາຍຜະລິດຕະພັນ ໃນປີ 2023

❖ ຕາຕະລາງຍອດຂາຍລູກຄ້າໂຄງການ:

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2023 ກັບ ຍອດຂາຍຕົວຈິງ

ລູກຄ້າ	ແຜນ 2023	ຍອດຂາຍ 2023	ສ່ວນຕ່າງ ຍອດຂາຍ 2023	
	ລິດ	ລິດ	ລິດ	ເປັນ %
B2B	49,284,000	60,904,000	11,620,000	23.58%

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍປີ 2023 ກັບ ຍອດຂາຍປີ 2022

ລູກຄ້າ	ຍອດຂາຍ 2023	ຍອດຂາຍ 2022	ສ່ວນຕ່າງ ຍອດຂາຍ 2022-2023	
	ລິດ	ລິດ	ລິດ	ເປັນ %
B2B	49,284,000	77,764,000	-28,480,000	-36.62%

❖ ຕາຕະລາງຍອດຂາຍລູກຄ້າ Spot

ລູກຄ້າ	ແຜນ 2023	ຍອດຂາຍ 2023	ສ່ວນຕ່າງ ຍອດຂາຍ 2023	
	ລິດ	ລິດ	ລິດ	ເປັນ %
SPOT	75,000,000	85,866,378	10,866,378	14.49%

❖ **ຕາຕະລາງຍອດຂາຍລູກຄ້າປ້ຳນ້ຳມັນ:**

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2023 ກັບ ຍອດຂາຍຕົວຈິງ

ລ/ດ	ລູກຄ້າ	ແຜນ	ຍອດຂາຍ	ສ່ວນຕ່າງ ແຜນ-ຍອດຂາຍ	
		ລິດ	ລິດ	ລິດ	ເປັນ %
1	ປ້ຳນ້ຳມັນພລາຕິນຳ/Platinum	12,475,177	11,352,000	-1,123,177	-9.00%
2	ປ້ຳນ້ຳມັນໂກລ/Gold	28,343,369	27,782,000	-561,369	-1.98%
3	ປ້ຳນ້ຳມັນມາດຕະຖານ/Standard	30,117,252	25,813,000	-4,304,252	-14.29%
4	ປ້ຳນ້ຳມັນ ທ້ອງຖິ່ນພັດທະນາ/Thongthin	10,514,134	10,442,000	-72,134	-0.69%
ລວມ		81,449,931	75,389,000	-6,060,931	-7.44%

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍປີ 2023 ກັບ ຍອດຂາຍປີ 2022

ລ/ດ	ລູກຄ້າ	ຍອດຂາຍ 2023	ຍອດຂາຍ 2022	ສ່ວນຕ່າງ ຍອດຂາຍ 2023-2022	
		ລິດ	ລິດ	ລິດ	ເປັນ %
1	ປ້ຳນ້ຳມັນພລາຕິນຳ/Platinum	11,352,000	12.734.750	−1,382,750	−10.85%
2	ປ້ຳນ້ຳມັນ ໂກລ/Gold	27,782,000	29.647.250	−1,865,250	−6.29%
3	ປ້ຳນ້ຳມັນມາດຕະຖານ/Standard	25,813,000	30.224.000	−4,411,000	−14.59%
4	ປ້ຳນ້ຳມັນທ້ອງຖິ່ນພັດທະນາ/Thongthin	10,442,000	11.667.000	−1,225,000	−10.50%
ລວມ		75,389,000	84.273.000	−8,884,000	−10.54%

❖ ຕາຕະລາງຍອດຂາຍລູກຄ້າທັງໝົດ

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2023 ກັບ ຍອດຂາຍປີ 2023

ລ/ດ	ລູກຄ້າ	ແຜນ 2023	ຍອດຂາຍ 2023	ສ່ວນຕ່າງ ແຜນ-ຍອດຂາຍ 2023	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ລູກຄ້າໂຄງການ/B2B	49,284,000	60,904,000	11,620,000.00	23.58%
2	ລູກຄ້າປ້ຳນ້ຳມັນ/Gas Station	81,449,930	75,389,000	(6,060,930.00)	-7.44%
3	SPOT	75,000,000	85,866,378	10,866,378.00	14.49%
ລວມ		205,733,930	222,159,378	16,425,448	7.98%

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍ 2023 ກັບ ຍອດຂາຍ 2022

ລ/ ດ	ລູກຄ້າ	ຍອດຂາຍ 2023	ຍອດຂາຍ 2022	ສ່ວນຕ່າງ ຍອດຂາຍ 2023-2022	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ລູກຄ້າໂຄງການ/B2B	60,904,000	77,764,000	-16,860,000	-21.68%
2	ລູກຄ້າປ້ຳນ້ຳມັນ/Gas Station	75,389,000	52,940,490	22,448,510	42.40%
3	SPOT	85,866,378	104,343,580	−18,477,202	−17.71%
	ລວມ/Total	222,159,378	235,048,070	-12,888,692	-5.48%

❖ ການບໍລິຫານສາງນ້ຳມັນ ໃນປີ 2023

1. ການຮັບເຂົ້າ ແລະ ການຈ່າຍອອກສາງນ້ຳມັນທັງໝົດ

ລ/ດ	ລາຍການ	2023	2022	ສ່ວນຕ່າງ 2023-2022	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ການຮັບເຂົ້າສາງທັງໝົດ	136,770,415	164,101,797	-27,331,382	-16.66%
2	ການຈ່າຍອອກສາງທັງໝົດ	136,588,881	163,212,423	-26,623542	-16.31%
	ລວມ	273,359,296	327,314,220	−53,954,942	−16.48%

2. ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນ ແຕ່ລະຊະນິດ

- ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນແອດຊັ່ງ 95 ໃນລະຫວ່າງເກັບຮັກສາເທົ່າກັບ −1,734ລິດ ຂອງຍອດຮັບທັງໝົດ 715,984 ລິດ ຢູ່ໃນເກນມາດຕະຖານໃນອັດຕາສະເລ່ຍ −0.23 ສ່ວນຮ້ອຍ;

- ค่าสะเลี่ยอายละเทีย ຂอງ ນ้ำมันแอดชัง 91 ในละหว่างเก๊บธักสาเท่ากับ −36,172 ลิด ຂอງยอด ธับทังหมิด 29,938,008 ลิด ยู่ในเกนมาดตะถานในอัดตาสะเลี่ย −0.12 ส่อนธ้อย;
- ค่าสะเลี่ยอายละเทีย ຂอງ น้ำมันกาซอน ในละหว่างเก๊บธักสาเท่ากับ −76,300 ลิด ຂอງยอดธับทัง หมิด 105,934,889 ลิด ยู่ในเกนมาดตะถานในอัดตาสะเลี่ย −0.07 ส่อนธ้อย.

❖ บุกถะลากอน

บໍลิสัด ปิโตธล้ຽม เทธดถิ้งลาอ มะหาซิน มิพะนักงานทังหมิดจำนอน 156 คิน, ในนั้นมิเพดยิงจำนอน 91 คิน. กานดำเนินงานด้านบุกถะลากอน ปะจำปี 2023 ผ่านมาแม่นเน้นใส่กานธับปะกันถอามพຽงพໍ ຂอງ พะนักงาน, กานสันหาบุกถะลากอนที่เหมาะสิมเข้ำตำแหน่งที่หว่างย่างมิปะสิดทิพาบ, เบิ่งแยงสะหอัดดิกานของ พะนักงานตามกิดละบຽบพายในบໍลิสัด และ ตามกิดหมายแธ่งงานอางออก. พ้อมนี้ก็ยังได้จัดใช้มิกานฝึก อิบธึมในหัวข้ต่างๆ เพื่อเพิ่มทักสะ และ ถอามธับธู้ขอງพะนักงานพายในอิงกอนดั่งนี้:

- กานเผิยแผ่นะโยบายบໍลิสัด, มาดตะถาน ISO และ กิดหมายปะจำสิกปี 2023;
- เผิยแผ่กิดละบຽบ และ นะโยบายบໍลิสัด (สำลับพะนักงานเข้ำใหม่);
- เผิยแผ่ละบຽบถอามปอดไพ และ สิ่งแอดล้อม;
- ฝึกอิบธึมละบับบับซิมาดตะถานใหม่ (IFRS);
- ฝึกอิบธึมกานຂับขี่ปอดไพ;
- ฝึกอิบธึมกานแจ้งพาสิอากอนท่อไป;
- ฝึกอิบธึมกานกานนำใช้ซ้อปแอ MS Excel ขั้น Intermediate;
- ฝึกอิบธึมกานดับไฟ;
- เผิยแผ่ขอบเขดสิดอำนาดในกานอะนุมัดเอกะสานพายใน.

ในสิกปี 2023 ที่ผ่านมา บໍลิสัดได้ธ่อมช่วยเหืือสังคิมผ่านโถงกานต่างๆ อิงตามถอามจำเป้น และ เป้นกานตอบแทนคืนแก่สังคิม ลอมมูนค่า **1,034,628,422 กิบ**

❖ กานมอบพันทะอากอน และ อื่นๆ เข้ำลัด ปะจำปี 2023

ปะเพดอากอน	ปี 2021	ปี 2022	ปี 2023
ผาสิบำเข้ำ	84,433,127,700	204,387,894,555	212,376,419,048
อากร	268,779,530,700	214,463,864,169	118,770,619,941
อมผ	143,983,943,199	243,242,799,714	231,616,178,284
บุละ นะ ทาง	107,570,320,000	123,195,666,360	112,531,120,000
ถังแธ	109,298,940,000	86,953,600,000	154,263,520,000
ธิมิดเต้	261,876,000	-	-

ປະເພດອາກອນ	ປີ 2021	ປີ 2022	ປີ 2023
ຄຸນນະພາບ	2,764,776,000	3,703,790,000	7,574,210,000
ໃບແຈ້ງພາສີ	130,714,999	181,957,300	289,796,050
ຄ່າຢອດສານ ມາກເກ້			336,330,000
ອມພ ຈ່າຍເພີ້ມ ປະຈຳເດືອນ	26,804,172,170	24,156,455,500	43,893,953,108
ອາກອນກຳໄລ	52,884,234	-	7,900,000,000
ອາກອນເງິນເດືອນ	441,733,970	456,209,631	2,085,594,446
ລວມ:	744,522,018,973	900,742,237,229	891,637,740,877

ເອກະສານລາຍງານການເງິນ ປະຈຳປີ 2023 ທີ່ຜ່ານການກວດສອບ ສາມາດສະຫຼຸບຕົວເລກໄດ້ດັ່ງນີ້:

ຫົວໜ່ວຍ: ກີບ

ລາຍການ	2023	2022
ຊັບສິນທັງໝົດ	2,242,512,137,619	1,891,034,517,557
ໜີ້ສິນທັງໝົດ	1,673,115,747,273	1,329,154,704,699
ສ່ວນຂອງຜູ້ຖືຮຸ້ນ	569,396,390,346	561,879,812,858
ລາຍຮັບທັງໝົດ	3,848,663,401,378	3,823,145,537,169
ກຳໄລ/(ຂາດທຶນ) ສຸດທິ	12,406,381,129	45,523,073,182
ກຳໄລສຸດທິຕໍ່ຮຸ້ນ	50	192

ຫຼັງປະທານກອງປະຊຸມ ໄດ້ລາຍງານວາລະນີ້ແລ້ວກໍ່ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ ປະກອບຄຳເຫັນ ແລະ ສອບຖາມ ເຊິ່ງບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງວາລະນີ້.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາວາລະນີ້ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.764.490 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.764.490 ສຽງ ຄິດເປັນ 100 %.

<u>ວາລະທີ 03: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024</u>

ປະທານກອງປະຊຸມໄດ້ລາຍງານຕໍ່ກອງປະຊຸມ: ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024 ມີດັ່ງນີ້:

ໃນປີ 2024 ຈະເປັນປີທີ່ມີຄວາມທ້າທາຍຄັ້ງໃຫຍ່ ສຳລັບບໍລິສັດ ເນື່ອງຈາກພວກເຮົາຈະຕ້ອງໄດ້ປັບປຸງລະບົບການ ບໍລິຫານຈັດການ ຈາກການດຳເນີນທຸລະກິດທີ່ຂາດທຶນສະສົມໃນຊຸມປີຜ່ານມາ ແລະ ຈຳເປັນຕ້ອງໄດ້ມີການຊຶດເຊີຍ ຈຳນວນຍອດຂາຍທີ່ຫາຍໄປຈາກລູກຄ້າໂຄງການທີ່ການກໍ່ສ້າງໄດ້ສຳເລັດໄປແລ້ວ. ດັ່ງນັ້ນ. ບໍລິສັດຈຶ່ງຕັດສິນໃຈນຳໃຊ້ຍຸດ ທະສາດທາງການຕະຫຼາດເຊີງລຸກ ແລະ ມີຄວາມເໝາະສົມຫຼາຍຂຶ້ນ ລວມທັງຍຸດທະສາດທາງການຕະຫຼາດພາຍໃນປະເທດ ອີກດ້ວຍ.

1) ການຂະຫຍາຍຕົວ ແລະ ຊຶດເຊີຍການຂາດທຶນໃນປີຊຸມຜ່ານມາ.

- ໂຄງການ B2B: ເພີ່ມປະລິມານການສະໜອງນ້ຳມັນໃຫ້ຫຼາຍຂຶ້ນ ໂດຍໃຊ້ປະໂຫຍດຈາກຄວາມໄດ້ປຽບດ້ານອຸປະທານ ແລະ ໂລຈິສຕິກຂອງບໍລິສັດ (ທຽບກັບຜູ້ນຳເຂົ້າລາຍອື່ນ) ພ້ອມກັບການປະຕິບັດຕາມກົດລະບຽບຂອງລັດຖະບານ; ເພີ່ມຖານລູກຄ້າໃນຮູບແບບ B2B ໃຫ້ຫຼາຍຂຶ້ນ (ໂດຍສະເພາະແມ່ນ ກຸ່ມລູກຄ້າຂຸດຄົ້ນບໍ່ແຮ່ ແລະ ຂາຍສົ່ງ);
- ການຂາຍຍ່ອຍ: ເພີ່ມປະລິມານການສະໜອງນ້ຳມັນໃຫ້ກັບລູກຄ້າປະຈຸບັນໃຫ້ຫຼາຍຂຶ້ນ ແລະ ລູກຄ້າ COCO ລາຍໃໝ່ທີ່ຫາມາໄດ້. ປັບປຸງພາບລັກ ແລະ ເພີ່ມມູນຄ່າໃຫ້ກັບທຸລະກິດນ້ຳມັນ ແລະ ທຸລະກິດຮ້ານສະດວກຊື້ໃນປ້ຳນ້ຳມັນ ເພື່ອໃຫ້ມີກຳໄລ ແລະ ປະລິມານການຂາຍເພີ່ມຂຶ້ນ:
  - ສົ່ງເສີມໃຫ້ລູກຄ້ານຳໃຊ້ການເຕີມນ້ຳມັນດ້ວຍບັດ (ບັດ PlusCard)
  - ພັດທະນາລະບົບການຈຳໜ່າຍນ້ຳມັນເຄື່ອງໃຫ້ໄດ້
  - ພັດທະນາຮ້ານກາເຟ
- ການຕະຫຼາດ ແລະ ການສົ່ງເສີມການຂາຍ ໂດຍເພີ່ມກຳໄລໃຫ້ຫຼາຍຂຶ້ນ ໂດຍການຫຼຸດຕົ້ນທຶນ. ສືບຕໍ່ຕິດຕາມ ແລະ ຮ່ວມມືກັບບັນດາບໍລິສັດອຸດສາຫະກຳ ເພື່ອຮັກສາສ່ວນແບ່ງທາງການຕະຫຼາດ/ຫຼຸດຄ່າໃຊ້ຈ່າຍດ້ານຕົ້ນທຶນ, ປະກັນໄພ ແລະ ການຂົນສົ່ງສິນຄ້າ.

2) ເພີ່ມປະສິດທິພາບທາງດ້ານການດຳເນີນງານ
- ສືບຕໍ່ ບໍລິຫານຈັດການຄ່າໃຊ້ຈ່າຍດ້ານການດຳເນີນງານ ແລະ ຄ່າໃຊ້ຈ່າຍດ້ານການລົງທຶນໃຫ້ມີປະສິດທິພາບ ໂດຍການດັດປັບໂຄງສ້າງ ແລະ ການລົງທຶນຂອງບໍລິສັດ ໃຫ້ໄດ້ຜົນຕອບແທນໄວ້ທີ່ສຸດ.
- ປັບປຸງປະສິດທິພາບໃນການດຳເນີນງານຄືນໃໝ່, ຂະຫຍາຍສາງນ້ຳມັນໃຫ້ສາມາດບັນຈຸປະລິມານມັນໄດ້ຫຼາຍຂຶ້ນ ແລະ ນຳໃຊ້ໃຫ້ເກີດປະໂຫຍດສູງສຸດ ເພື່ອຫຼຸດຜ່ອນການລົງທຶນໃນການຂະຫຍາຍສາງນ້ຳມັນ.

3) ນະໂຍບາຍທາງດ້ານການເງິນ
- ຫຼຸດອັດຕາສ່ວນລູກໜີ້ການຄ້າຂອງບໍລິສັດໃນປີ 2023 ໃຫ້ຫຼາຍທີ່ສຸດ,
- ຫຼຸດຜ່ອນຄວາມສ່ຽງສິນເຊື່ອເບີກເກີນບັນຊີຂອງບໍລິສັດ ກັບບັນດາຜູ້ສະໜອງ,
- ບໍລິຫານ ຄວາມສ່ຽງດ້ານສິນເຊື່ອຂອງລາຄານ້ຳມັນອ້າງອີງໃນປະຈຸບັນ,
- ຊອກຫາຊ່ອງທາງຫຼຸດຄວາມສ່ຽງ ການຂາດທຶນຈາກອັດຕາແລກປ່ຽນໃຫ້ຫຼາຍທີ່ສຸດ.

4) ວັດທະນະທຳອົງກອນ
- ສົ່ງເສີມ ພະນັກງານທີ່ມີປະສິດທິພາບສູງ ໄປສູ່ບົດບາດໜ້າວຽກທີ່ທ້າທາຍຍິ່ງຂຶ້ນ.
- ພັດທະນາຂີດຄວາມສາມາດຂອງພະນັກງານ - ສົ່ງເສີມການກ້າວຂ້າມໄປສູ່ການປ່ຽນແປງ ແລະ ຝຶກອົບຮົມໜ້າວຽກໃນສາຍງານອື່ນ.
- ຊຸກຍູ້ ໃຫ້ມີການຄິດຄົ້ນນະວັດຕະກຳໃໝ່ໆ.

5) ແຜນຍອດຂາຍໃນປີ 2024

i) ລູກຄ້າໂຄງການ/B2B

ລູກຄ້າ	ແຜນ ປີ 2024 (ລິດ)
B2B & SPOT	**166,177,000**

ii) ລູກຄ້າປ້ຳນ້ຳມັນ

ລ/ດ	ລູກຄ້າ	ແຜນ ປີ 2024 (ລິດ)
1	ປ້ຳນ້ຳມັນ ພລາຕິນຳ/Platinum	**91,776,000**
2	ປ້ຳນ້ຳມັນ ໂກລ/Gold	
3	ປ້ຳນ້ຳມັນ ມາດຕະຖານ/Standard	
4	ປ້ຳນ້ຳມັນ ທ້ອງຖິ່ນພັດທະນາ/Thongthin	
ລວມ		**257,953,000**

ນອກຈາກຂະຫຍາຍຍອດຂາຍນ້ຳມັນແລ້ວ ຍັງມີການຂະຫຍາຍປ້ຳນ້ຳມັນ ເພີ່ມອີກ 6 ປ້ຳ ຄືດັ່ງນີ້:

- ປ້ຳນ້ຳມັນ ໂກລ/Gold/Platinum ຈຳນວນ 1 ປ້ຳ; ແລະ
- ປ້ຳນ້ຳມັນ ມາດຕະຖານ/Standard ຈຳນວນ 5 ປ້ຳ.

iii) ລູກຄ້ານ້ຳມັນເຕົາ, ຢາງໝາກຕອຍ ແລະ ນ້ຳມັນເຄື່ອງ

ລ/ດ	ລູກຄ້າ	ແຜນ ປີ 2024 (ລິດ)
1	ນ້ຳມັນເຕົາ	ຕາມການສັ່ງຊື້ຂອງ ລູກຄ້າ
2	ຢາງໝາກຕອຍ	ຕາມການສັ່ງຊື້ຂອງ ລູກຄ້າ
3	ນ້ຳມັນເຄື່ອງ	ຕາມການສັ່ງຊື້ຂອງ ລູກຄ້າ
ລວມ/Total		

ຫຼັງປະທານກອງປະຊຸມ ໄດ້ລາຍງານວາລະນີ້ແລ້ວກໍ່ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ ປະກອບຄຳເຫັນ ແລະ ສອບຖາມ ເຊິ່ງບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງວາລະນີ້.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາວາລະນີ້ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.764.490 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.764.490 ສຽງ ຄິດເປັນ 100 %.

<u>ວາລະທີ 04: ພິຈາລະນາ ແລະ ຮັບຮອງບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2023 ເນື່ອງມາຈາກບໍລິສັດ ຂາດທຶນໃນຊຸມປີຜ່ານມາ</u>

ປະທານກອງປະຊຸມໄດ້ລາຍງານຕໍ່ກອງປະຊຸມ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ ລົງ ວັນທີ 29 ທັນວາ 2022, ມາດຕາ 153 "ການແບ່ງເງິນປັນຜົນ" ຫ້າມບໍ່ໃຫ້ບໍລິສັດຈ່າຍເງິນປັນຜົນ ເມື່ອບໍລິສັດຍັງມີການ ຂາດທຶນສະສົມຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ.

ດັ່ງນັ້ນ, ສະພາບໍລິຫານ ຈຶ່ງເຫັນດີຮັບຮອງການບໍ່ປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2023 ເນື່ອງມາຈາກບໍລິສັດ ຍັງມີການຂາດທຶນສະສົມຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ ແລະ ສະເໜີນຳກຳໄລສຸດທິປະຈຳປີ ເພື່ອຫັກເຂົ້າຂາດທຶນສະສົມ ລໍຖ້າແບ່ງປັນ.

ຫຼັງປະທານກອງປະຊຸມ ໄດ້ລາຍງານວາລະນີ້ແລ້ວກໍ່ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ ປະກອບຄຳເຫັນ ແລະ ສອບຖາມ ເຊິ່ງບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງວາລະນີ້.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາວາລະນີ້ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງ ໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.764.490 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.764.490 ສຽງ ຄິດເປັນ 100 %.

ວາລະທີ 05: ພິຈາລະນາ ແລະ ຮັບຮອງ ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ PriceWaterhouseCooper (Lao) Sole Co., Ltd (“PwC”) ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2024 ບໍ່ເກີນ 37.000 ໂດລາສະຫະລັດ

ປະທານກອງປະຊຸມໄດ້ລາຍງານຕໍ່ກອງປະຊຸມ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ ລົງ ວັນທີ 29 ທັນວາ 2022 ມາດຕາ 152 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍສະພາບໍລິຫານໄດ້ພິຈາລະນາເຫັນຄວນໃຫ້ ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາແຕ່ງຕັ້ງ PWC ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2024 ໂດຍກຳ ນົດຄ່າຈ້າງບໍ່ເກີນ 37.000 ໂດລາສະຫະລັດ; PWC ເປັນບໍລິສັດກວດສອບບັນຊີພາຍນອກທີ່ໄດ້ຮັບອະນຸຍາດຈາກ ສຳນັກ ງານຄະນະກຳມະການຄຸ້ມຄອງຫຼັກຊັບ. ປທລ ໄດ້ໃຊ້ບໍລິການ PWC ເປັນຜູ້ກວດສອບບັນຊີພາຍນອກແຕ່ປີ 2018 ຫາ 2023 ເຫັນວ່າ PWC ມີປະສິບການ, ມີຄວາມລະອຽດຮອບຄອບໃນການທົບທວນ. ຊຶ່ງລາຍລະອຽດຄ່າຈ້າງແຕ່ລະປີມີດັ່ງ ລຸ່ມນີ້:

ປີ	ມູນຄ່າການກວດສອບ
2018	55.000
2019	34.000
2020	34.000
2021	32.000
2022	32.000
2023	32.000
2024	ບໍ່ເກີນ 37.000

ຫຼັງປະທານກອງປະຊຸມ ໄດ້ລາຍງານວາລະນີ້ແລ້ວກໍ່ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ ປະກອບຄຳເຫັນ ແລະ ສອບຖາມ ເຊິ່ງບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງວາລະນີ້.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາວາລະນີ້ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງ ໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.764.490 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.764.490 ສຽງ ຄິດເປັນ 100 %.

<u>ວາລະທີ 06: ພິຈາລະນາ ແລະ ຮັບຮອງ ການລາອອກຈາກຕຳແໜ່ງ ປະທານສະພາບໍລິຫານ ປທລ ຂອງ ທ່ານ ຫວ່າງ ຣັຕະນະວົງສ໌ ອັນເນື່ອງມາຈາກຄົບວາລະ</u>

ປະທານກອງປະຊຸມໄດ້ລາຍງານຕໍ່ກອງປະຊຸມ: ອີງຕາມຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ສະບັບເລກທີ 10/ຄຄຊ, ລົງວັນທີ 26 ເມສາ 2019. ອາຍຸຂອງສະພາບໍລິຫານໜຶ່ງສະໄໝເທົ່າ 2 ປີ ຊຶ່ງທ່ານ ຫວ່າງ ຣັຕະນະວົງສ໌ ດຳລົງຕຳແໜ່ງເປັນ ປະທານສະພາບໍລິຫານ ປທລ ໃກ້ຄົບວາລະ 2022-2024 ແລ້ວ ແລະ ມີຈຸດປະສົງຂໍລາອອກຈາກຕຳແໜ່ງ ປະທານສະພາ ບໍລິຫານ ປທລ.

ຫຼັງປະທານກອງປະຊຸມ ໄດ້ລາຍງານວາລະນີ້ແລ້ວກໍ່ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ ປະກອບຄຳເຫັນ ແລະ ສອບຖາມ ເຊິ່ງມີຜູ້ຖືຮຸ້ນມີຄຳເຫັນດັ່ງນີ້:

ຜູ້ຖືຮຸ້ນ: ທ່ານ ນາງ ຕຸກຕາ ແກ້ວວິຈິດ (ໄດ້ຮັບມອບສິດຈາກ ທ່ານ ໄກອັນ ກາດາວານິດ) ປະກອບຄຳເຫັນວ່າ: ທີ່ວ່າໃກ້ ຄົບວາລະ ແລະ ມີຈຸດປະສົງຂໍລາອອກຈາກຕຳແໜ່ງ ຈະຄົບວາລະ ຫຼື ລາອອກ ມັນຄືຢ່າງໃດຢ່າງໜຶ່ງ, ມັນເກີດຂຶ້ນພ້ອມກັນ ບໍ່ໄດ້ ເພາະວ່າການລາອອກໝາຍເຖິງການທີ່ຈະຢຸດເຮັດວຽກນີ້ກ່ອນກຳນົດ ເຂົາເອີ້ນວ່າລາອອກ. ດັ່ງນັ້ນ, ສຳລັບທ່ານນີ້ຈະ ຕ້ອງບອກວ່າປະຕິບັດໜ້າທີ່ຈົນຄົບກຳນົດແລ້ວ ເຮັດວຽກຈົນວັນສຸດທ້າຍ ຈົບສົມບູນພຽງແຕ່ຂໍບໍ່ຮັບການສະເໜີໃຫ້ກັບເຂົ້າ ດຳລົງຕຳແໜ່ງຕໍ່ອີກ. ການລາອອກມັນຄືດ້ານລົບ ຖ້າບອກແບບຕາມທີ່ສະເໜີໄປ ຈະສະຫງ່າງາມກ່ວາ.

ປະທານກອງປະຊຸມ: ຂອບໃຈຕໍ່ຄຳເຫັນດັ່ງກ່າວ ແລະ ຊີ້ແຈງວ່າ: ທ່ານ ຫວ່າງ ຣັຕະນະວົງສ໌ ດຳລົງຕຳແໜ່ງເປັນປະທານ ສະພາບໍລິຫານ ປທລ ຈະຄົບວາລະ ຈະເຮັດວຽກຈົນຄົບກຳນົດ ແລະ ບໍ່ມີຈຸດປະສົງຈະສືບຕໍ່ດຳລົງຕຳແໜ່ງດັ່ງກ່າວຕໍ່. ບໍ່ ແມ່ນການລາອອກເພື່ອຢຸດເຮັດວຽກກ່ອນກຳນົດ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງວາລະນີ້.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາວາລະນີ້ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງ ໜຶ່ງຂອງຈຳນວນສຽງທີ່ເ ຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.764.490 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.764.490 ສຽງ ຄິດເປັນ 100 %.

<u>ວາລະທີ 07: ພິຈາລະນາ ແລະ ຮັບຮອງ ທ່ານ ສິລາ ວຽງແກ້ວ ເປັນ ປະທານສະພາບໍລິຫານ ອິດສະລະ ປທລ</u>

ປະທານກອງປະຊຸມໄດ້ລາຍງານຕໍ່ກອງປະຊຸມ: ອີງຕາມຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ສະບັບເລກທີ 10/ຄຄຊ, ລົງວັນທີ 26 ເມສາ 2019. ໂຄງປະກອບດ້ານບຸກຄະລາກອນຂອງສະພາບໍລິຫານຕ້ອງມີປະທານສະພາບໍລິຫານ ແລະ ເນື່ອງຈາກ ປະທານສະພາບໍລິຫານຜູ້ເກົ່າ ໄດ້ລາອອກ ດັ່ງນັ້ນ, ບໍລິສັດຈຶ່ງແຕ່ງຕັ້ງທ່ານ ສິລາ ວຽງແກ້ວ ເປັນ ປະທານສະພາ ບໍລິຫານ ປທລ ຜູ້ໃໝ່.

ຫຼັງປະທານກອງປະຊຸມ ໄດ້ລາຍງານວາລະນີ້ແລ້ວກໍ່ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ ປະກອບຄຳເຫັນ ແລະ ສອບຖາມ ເຊິ່ງບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງວາລະນີ້.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາວາລະນີ້ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.764.490 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.764.490 ສຽງ ຄິດເປັນ 100 %.

ວາລະທີ 08: ພິຈາລະນາ ແລະ ຮັບຮອງອາຍຸການຂອງສະມາຊິກສະພາບໍລິຫານ ປທລ ປະຈຳສົກປີ 2025-2027

ປະທານກອງປະຊຸມໄດ້ລາຍງານຕໍ່ກອງປະຊຸມ: ອີງຕາມຂໍ້ຕົກລົງວ່າດ້ວຍ ສະພາບໍລິຫານ ສະບັບເລກທີ 10/ຄຄຊ, ລົງວັນທີ 26 ເມສາ 2019; ສະມາຊິກສະພາບໍລິຫານ ມີອາຍຸການ 2 ປີ ແລະ ສະພາບໍລິຫານຂອງ ປທລ ຊຸດປະຈຸບັນ (2022-2024) ໄດ້ຮັບການແຕ່ງຕັ້ງໂດຍກອງປະຊຸມຜູ້ຖືຮຸ້ນປະຈ□າປີ 2021 ເຊິ່ງຈະຄົບວາລະໃນປີນີ້ ແລະ ເພື່ອເຮັດ ໃຫ້ການຄຸ້ມຄອງບໍລິຫານຂອງ ປທລ ດຳເນີນໄປຢ່າງຕໍ່ເນື່ອງ. ດັ່ງນັ້ນ, ປທລ ຈຶ່ງສະເໜີໃຫ້ ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງເອົາ ອາຍຸການຂອງສະມາຊິກສະພາບໍລິຫານ ປທລ ປະຈຳສົກປີ 2025-2027 ໂດຍມີລາຍຊື່ ແລະ ຕຳແໜ່ງຕໍ່ໄປນີ້:

1. ທ່ານ ສີລາ ວຽງແກ້ວ : ປະທານສະພາບໍລິຫານ ອິດສະລະ;
2. ທ່ານ ຄຳສອນ ສິດທິໄຊ : ຮອງປະທານສະພາບໍລິຫານ;
3. ທ່ານ ມາກ ລູອັນ : ສະມາຊິກສະພາບໍລິຫານ;
4. ທ່ານ ນາງ ແສງເດືອນ ກ້ຽວສຸວັດ : ສະມາຊິກສະພາບໍລິຫານ;
5. ທ່ານ ວຽງຄອນ ສິດທິໄຊ : ປະທານຄະນະກຳມະການເສດຖະກິດ, ສະມາຊິກສະພາບໍລິຫານ ອິດສະລະ;
6. ທ່ານ ບຸນຖັນ ວົງສຸລີ : ປະທານຄະນະກຳມະການກວດກາຄວາມສ່ຽງພາຍໃນ, ສະມາຊິກສະພາບໍລິຫານ ອິດສະລະ;
7. ທ່ານ ສຈ ດາວອນ ຫວ່າງວິຈິດ : ປະທານຄະນະກຳມະການກວດສອບພາຍໃນ, ສະມາຊິກສະພາບໍລິຫານ ອິດສະລະ.

ຫຼັງປະທານກອງປະຊຸມ ໄດ້ລາຍງານວາລະນີ້ແລ້ວກໍ່ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ ປະກອບຄຳເຫັນ ແລະ ສອບຖາມ ເຊິ່ງບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງວາລະນີ້.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາວາລະນີ້ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.764.490 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.764.490 ສຽງ ຄິດເປັນ 100 %.

ປະທານກອງປະຊຸມໄດ້ແຈ້ງໃຫ້ຜູ້ຖືຮຸ້ນຊາບວ່າ ກອງປະຊຸມໄດ້ຮັບການພິຈາລະນາ ແລະ ອະນຸມັດຄົບຖ້ວນທຸກ ວາລະຕາມໜັງສືເຊີນແລ້ວ ແລະ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ແລະ ສອບຖາມຕື່ມ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມ ໃນເວລາ 10:30 ໂມງ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ປະທານກອງປະຊຸມ

ບໍລິສັດ ປິໂຕຣລຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ທ້າວ ຣັຕຕະນະວົງ Vang RATANAVONG

ໝາຍເຫດ: ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ໃຫ້ຖືເອົາສະບັບພາສາລາວເປັນຫຼັກ.